# ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ດ້ານວິຊາການ
## ລະຫ່ວາງ
## ມະຫາວິທະຍາໄລ ສຸພານຸວົງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກັບ
## ມະຫາວິທະຍາໄລ ເຕັກໂນໂລຊີ ຣາຊະມຸງຄຸນລ້ານນາ ແຫ່ງ ຣາຊະອານາຈັກໄທ

ມະຫາວິທະຍາໄລ ສຸພານຸວົງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມະຫາວິທະຍາໄລ ເຕັກໂນໂລຊີຣາຊະມຸງຄຸນລ້ານນາ ແຫ່ງ ຣາຊະອານາຈັກໄທ, ຕໍ່ໄປນີ້ເອີ້ນວ່າ: ຄູ່ສັນຍາ, ໄດ້ຕົກລົງສົ່ງເສີມການແລກປ່ຽນ ແລະ ຮ່ວມມືທາງດ້ານວິຊາການ ລະຫ່ວາງ ສອງຝ່າຍດັ່ງຕໍ່ໄປນີ້:

1. ຄູ່ສັນຍາສອງຝ່າຍຈະສົ່ງເສີມກິດຈະກຳດັ່ງຕໍ່ໄປນີ້:
    - 1.1 ແລກປ່ຽນຄວາມຮູ້ທາງດ້ານວິຊາການລະຫວ່າງຄູ-ອາຈານ ແລະ ນັກສຶກສາແຕ່ລະຄະນະວິຊາ;
    - 1.2 ການເປີດສອນຫຼັກສູດຮ່ວມກັນ;
    - 1.3 ການຈັດການສຶກສາທາງໄກຮ່ວມກັນ;
    - 1.4 ຮ່ວມຝຶກອົບຮົມຫຼັກສູດໃນໄລຍະສັ້ນໃນຂອບເຂດທີ່ມີຄວາມສົນໃຈຮ່ວມກັນ;
    - 1.5 ຮ່ວມກິດຈະກຳດ້ານການຄົ້ນຄວ້າວິໄຈ, ການເຜີຍແຜ່ວາລະສານ ແລະ ສິ່ງຕີພິມ;
    - 1.6 ຮ່ວມໂຄງການແລກປ່ຽນດ້ານສິນລະປະ ແລະ ວັດທະນະທຳດ້ວຍກັນ;
2. ລາຍລະອຽດກ່ຽວກັບການຈັດຕັ້ງປະຕິບັດການແລກປ່ຽນ ແລະ ການຮ່ວມມືຕ່າງໆ ທີ່ ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ຕ້ອງຜ່ານການເຈລະຈາ ແລະ ກຳນົດຮ່ວມກັນດ້ວຍຮູບການເຮັດເປັນສັນຍາ ຊຶ່ງທັງສອງຝ່າຍເຊັນນຳກັນໄປຕາມແຕ່ລະກໍລະນີບົນພື້ນຖານສັນຕິພາບ, ເອກະລາດ, ມິດຕະພາບ, ຢູ່ຮ່ວມກັນໂດຍສັນຕິ ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນແລະກັນ ແລະ ຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດ.
3. ບົດບັນທຶກຄວາມເຂົ້າໃຈສະບັບນີ້ຕ້ອງຢູ່ພາຍໃຕ້ກົດໝາຍ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ຄືກົດໝາຍ ຂອງ ຣາຊະອານາຈັກໄທ ຫຼື ສາກົນ, ທຸກໆ ການຕົກລົງ ແລະ ພັນທະຂອງທັງສອງຝ່າຍ ທີ່ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ ຕ້ອງຮັບປະກັນ ແລະ ປະຕິບັດຕາມການເຫັນດີ ເຫັນພ້ອມ, ການອະນຸມັດ, ການອະນຸຍາດ ແລະ ການຮັບຮອງຈາກລັດຖະບານຂອງທັງສອງຝ່າຍ.
4. ທຸກກິດຈະກຳທີ່ເປັນຜົນມາຈາກບົດບັນທຶກຄວາມເຂົ້າໃຈສະບັບນີ້ຕ້ອງຢູ່ພາຍໃຕ້ກົດໝາຍ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ຄືກົດໝາຍ ຂອງ ຣາຊະອານາຈັກໄທ,
5. ບົດບັນທຶກຄວາມເຂົ້າໃຈສະບັບນີ້ມີຜົນບັງຄັບໃຊ້ເປັນເວລາ 5 ປີ ແລະ ສາມາດດັດແກ້ ຫຼື ຕໍ່ອາຍຸໄດ້ຕາມການຕົກລົງເຫັນດີນຳກັນທັງສອງຝ່າຍ, ຝ່າຍໃດໜຶ່ງສາມາດສະເໜີ ແລະ ຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ໄດ້ທຸກເມື່ອ ໂດຍມີແຈ້ງການເປັນລາຍລັກອັກສອນທີ່ມີລາຍເຊັນຂອງເຈົ້າໜ້າທີ່ກ່ຽວຂ້ອງຂອງຝ່າຍຕົນ, ການແຈ້ງດັ່ງກ່າວຕ້ອງສົ່ງໃຫ້ອີກຝ່າຍໜຶ່ງ ໄດ້ຮັບຢ່າງໜ້ອຍ 6 ເດືອນ ກ່ອນສິ້ນສຸດສັນຍາ.

6. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ມື້ທີ່ຜູ້ຕາງໜ້າທັງສອງຝ່າຍ ໄດ້ລົງລາຍເຊັນຮ່ວມກັນເປັນຕົ້ນໄປ.
7. ທຸກຂໍ້ຂັດແຍ່ງ ຫຼື ຄວາມບໍ່ເປັນເອກະພາບທີ່ເກີດຂຶ້ນຈາກການຕີຄວາມໝາຍ ຫຼື ການຈັດຕັ້ງປະຕິບັດໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂແບບເພື່ອນມິດໂດຍຜ່ານການປຶກສາຫາລືລະຫວ່າງຄູ່ສັນຍາ.

ເຮັດທີ່: ມ. ສຸພານຸວົງ..., ໃນວັນທີ: 24 APR 2017 ...ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະອັງກິດ, ທັງສອງພາສາ ມີຄວາມໝາຍຖືກຕ້ອງ ແລະມີຄຸນຄ່າເທົ່າທຽມກັນ, ໃນກໍລະນີທີ່ຕີຄວາມໝາຍແຕກຕ່າງໃຫ້ໃຊ້ພາສາອັງກິດເປັນບ່ອນອີງ ແລະ ຄູ່ສັນຍາຮັກສາໄວ້ຝ່າຍລະສະບັບ.

ເພື່ອເປັນສັກຂີພະຍານ, ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈສະບັບນີ້.

ຕາງໜ້າມະຫາວິທະຍາໄລ ສຸພານຸວົງ
ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

-----------------------------

ຊື່: ຮສ. ປທ. ວີໄຊ ຈັນສະຫວ່າງ
ຕຳແໜ່ງ: ອະທິການບໍດີ

ຕາງໜ້າມະຫາວິທະຍາໄລ ເຕັກໂນໂລຊີ ຣາຊະມຸງຄຸນລ້ານນາ
ແຫ່ງຣາຊະອານາຈັກໄທ

Nimyoot S. ...

-----------------------------

ຊື່: รศ.ดร.นำยุทธ์ สงค์ธนาพิทักษ์
ຕຳແໜ່ງ: ອະທິການບໍດີ